# ກອງປະຊຸມຫຼາຍຝ່າຍ ກ່ຽວກັບການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ (RAI)

10 ພະຈິກ 2021, ສປປ ລາວ

## ການຈັດຕັ້ງປະຕິບັດວຽກງານການສົ່ງເສີມ ການ ລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີຄວາມ ຮັບຜິດຊອບຂອງພາກເອກະຊົນ


ຊື່ ແລະ ນາມສະກຸນ ຜູ້ນຳສະເໜີ: ທ່ານ ນາງ ສຸໄພວັນ ທ່ຽງຈັນໄຊ

ຕຳແໜ່ງ: ຮອງອຳນວຍການ

ຊື່ອົງການຈັດຕັ້ງ: ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ, ຕາງໜ້າ: ຄະນະ ບໍລິຫານງານ ສະພາການຄ້າແລະອຸດສາຫະກຳແຫ່ງຊາດລາວ





Food and Agriculture Organization of the United Nations

ສະຫະພາບ ເອີຣົບ European Union

german cooperation DEUTSCHE ZUSAMMENARBEIT

Implemented by giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ເນື້ອໃນບົດສະເໜີ

1. ແຮງຈູງໃຈຂອງນັກລົງທຶນ ທີ່ມາລົງທຶນໃນ ສປປ ລາວ.
2. ວິໄສທັດຂອງນັກລົງທຶນ.
3. ຂໍ້ສະດວກ ແລະ ຫຍຸ້ງຍາກໃນການດຳເນີນງານ.
4. ຄຳເຫັນ ແລະ ຂໍ້ສະເໜີ.

# ແຮງຈູງໃຈຂອງນັກລົງທຶນ ສປປ ລາວ

1) ມີສະຖຽນລະພາບທາງດ້ານການເມືອງ, ໄພພິບັດທາງທຳມະຊາດມີນ້ອຍ
2) ລັດທະບານສົ່ງເສີມການລົງທຶນ ດ້ານກະສິກຳ-ປ່າໄມ້ ປູກໄມ້ໃສ່ດິນຊຸດໂຊມ ເພີ້ມການປົກຫຸ້ມພື້ນທີ່ສີຂຽວ ຮັກສາປ່າໄມ້ທາ◌ໍມະຊາດ.
3) ແຜນຍຸດທະຍາດປ່າໄມ້ ສາມາດປະກອບສ່ວນພັດທະນາເສດຖະກິດສັງຄົມ ແບບຍືນຍົງ ສີຂຽວ ແລະປົກປັກຮັກສາສິ່ງແວດລ້ອມ
4) ມີເນື້ອທີ່ເປົ່າຫວາງ ແລະ ຄວາມອຸດົມສົມບູນທາງພູມີສາດ.
5) ມີທາງແຮງທ້ານດ້ານແຮງງານ,ໃກ້ຕະຫລາດ, ມີເສັ້ນທາງລົດໄຟເພື່ຂົນສົ່ງ

# ວິໄສທັດຂອງນັກລົງທຶນ

1) ສະໝັກໃຈເຂົ້າຮ່ວມເປັນສະມາຊິກຂອງສະພາຄຸ້ມຄອງປ່າໄມ້ FSC (Forest Stewardship Council).
2) ກຳນົດເນື້ອໃນມາດຕະຖານ ສຳລັບການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ລະບົບຕ່ອງໂສ້ການຜະລິດ CoC (Chain of Custody).
3) FSC ເປັນອົງກອນທີ່ຍອມຮັບຂອງສາກົນທີ່ ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້  ໂດຍບັນດາສະມາຊິກຈະຕ້ອງຮັບຜິດຊອບໃນສາມພາກສ່ວນຫຼັກຄື: ເສດຖະກິດ, ສິ່ງແວດລ້ອມແລະ ສັງຄົມ.

# ຂໍ້ສະດວກ ແລະ ຫຍຸ້ງຍາກໃນການດຳເນີນງານ

1) ມີຫລາຍນິຕິກຳ ແລະ ກົດຫມາຍທີ່ກ່ຽວຂ້ອງໄດ້ມີການປັບປຸງ ເຊັ່ນ: ກົດໝາຍປ່າໄມ້, ກົດໝາຍສົ່ງເສີມການລົງທຶນ, ກົດໝາຍສິ່ງແວດລ້ອມ, ນິຕິກາການນາເຂົ້າແລະສົ່ງອອກ.

2) ສຸມໃສ່ປູກໄມ້ໃນພື້ນທີ່ດິນ ທີ່ຊຸດໂຊມ ເພີ່ມການປົກຫຸ້ມ ຮັກສາປ່າໄມ້ທາ◌ໍມະຊາດ.

3) ປະກອບສ່ວນລຶບລ້າງຄວາມທຸກຍາກຂອງປະຊາຊົນ ດ້ວຍຮູບການປູກໄມ້ອຸດສາຫະກຳແບບປະສົມປະສານກັບພຶດກະສິກຳ ໂດຍນໍາໃຊ້ແຮງງານຢູ່ຊົນນະບົດແບບມີສ່ວນຮ່ວມ.

4) ປະກອບສ່ວນພັດທະນາເສດຖະກິດ-ສັງຄົມແບບຍືນຍົງສີຂຽວ ແລະ ປົກປັກຮັກສາສິ່ງແວດລ້ອມ ພ້ອມຫລຸດຜ່ອນພາວະໂລກຮ້ອນທີ່ເປັນບັນຫາເດັ່ນຂອງໂລກໃນປັດຈຸບັນ.

5) ຂະບວນການ ເຊົ່າ/ສຳປະທານ ທີ່ດິນໃນປ່າຜະລິດແຫ່ງຊາດທີ່ຊຸດໂຊມບໍ່ສາມາດຟື້ນຟູດ້ວຍຕົວເອງໄດ້ ເພື່ອເຮັດກະສິກຳ-ປ່າໄມ້ ຍັງຫຍຸ້ງຍາກ ບາງນິຕິກຳ ແລະ ກົດໝາຍຂອງກະຊວງທີ່ກ່ຽວຂ້ອງບໍ່ທັນສອດຄ່ອງກັນ ແລະ ໃຊ້ເວລາໃນການດຳເນີນງານ.

6) ການຂະຫຍາຍພື້ນທີ່ປູກໄມ້ຍັງຊັກຊ້າ ຍ້ອນຂະບວນການສຳຫລວດພື້ນທີ່ປູກໄມ້ ມີຄວາມຫຍຸ້ງຍາກຫລາຍ ປະຊາຊົນບາງພື້ນທີ່ບໍ່ໃຫ້ຄວາມຮ່ວມມື ແລະ ບໍ່ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງລັດຕໍ່ການປູກໄມ້ໃນປ່າຜະລິດ.

# ຄຳເຫັນ ແລະ ຂໍ້ສະເໜີ

1) ຫລຸດຂັ້ນຂອດ ສິ່ງກີດຂວາງ ອຸດຕັນທຸລະກິດ ໂດຍລວມແມ່ນ ສະເໜີໃຫ້ຂະແໜງ ການຂອງລັດປະຕິບັດຄຳສັ່ງເລກທີ 02 ແລະ ຄຳສັ່ງອື່ນໆຂອງນາຍົກກ່ຽວກັບການອຳນວຍຄວາມສະດວກ ແລະ ສົ່ງເສີມການຜະລິດ, ທຸລະກິດ ແລະ ການລົງທຶນ.

2) ມີນະໂຍບາຍສົ່ງເສີມການລົງທຶນດ້ວຍການອອກນິຕິກຳທີ່ກະທັດຮັດ , ຮັດກຸມ ແລະ ໂປ່ງໃສ.

3) ປັບປຸງນິຕິກຳຂອງຂະແໜງການບໍ່ໃຫ້ຊ້ຳຊາກ ແລະ ຂັດກັນເອງ.

4) ປັບປຸງຂອດປະສານງານ ກົນໄກການແກ້ໄຂຂໍ້ຂັດແຍ່ງຂອງລັດຕໍ່ກັບວຽກງານການລົງທຶນດ້ານກະສິກຳ ແລະ ປ່າໄມ້ ຊັດເຈນ ແລະ ເປັນສູນລວມ.



# ຂໍຂອບໃຈ!

ສຸໄພວັນ ທ່ຽງຈັນໄຊ

+856 20 54199289

Email: spv@buraphawood.com

www.buraphawood.com

Food and Agriculture Organization of the United Nations

ສະຫະພາບ ເອີຣົບ
European Union

german cooperation
DEUTSCHE ZUSAMMENARBEIT

Implemented by
giz Deutsche Gesellschaft für Internationale Zusammenarbeit (GIZ) GmbH